Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Embassy of Switzerland
Swiss Agency for Development
and Cooperation SDC

UNEP

UNDP
Empowered lives.
Resilient nations.



# ຜົນກະທົບຂອງການຜະລິດກະສິກຳຕາມສັນຍາ ຕໍ່ກັບຄວາມທຸກຍາກ ແລະ ສິ່ງແວດລ້ອມຢູ່ໃນ ສ.ປ.ປ.ລາວ





ກໍລະນີສຶກສາການປູກສາລີລ້ຽງສັດ, ມັນຕົ້ນ ແລະ ກ້ວຍ

ທັນວາ 2015

# ຄຳນຳ

ຄວາມທຸກຍາກ ແລະ ສິ່ງແວດລ້ອມ ແມ່ນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ການພັດທະນາຂອງ ສ.ປ.ປ.ລາວ ເຊິ່ງລັດຖະບານໄດ້ໃຫ້ຄວາມສຳຄັນໃນການແກ້ໄຂ ແລະ ໄດ້ກຳນົດບັນຫາດັ່ງກ່າວເປັນເປົ້າໝາຍບູລິມະສິດໃນແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015), ໂດຍສະເພາະ ໄດ້ກຳນົດເຂົ້າໃນເປົ້າໝາຍສະຫະສະວັດເພື່ອການພັດທະນາ (MDG's) ທີ 1 ແລະ ທີ 7 ກ່ຽວກັບການລຶບລ້າງຄວາມອຶດຫິວ ແລະ ຄວາມທຸກຍາກໃຫ້ຂາດຕົວ ແລະ ຮັບປະກັນຄວາມຍືນຍົງຂອງສະພາບແວດລ້ອມ. ລັດຖະບານໄດ້ກຳນົດທິດທາງການພັດທະນາຕາມທິດຍືນຍົງດ້ວຍການກຳນົດ ແລະ ປະຕິບັດນະໂຍບາຍພັດທະນາທີ່ສົມສ່ວນລະຫວ່າງ ການພັດທະນາເສດຖະກິດ, ສັງຄົມ ແລະ ການປົກປັກຮັກສາສິ່ງພາບແວດລ້ອມ ໂດຍຖືເອົາເສດຖະກິດເປັນໃຈກາງ, ສັງຄົມເປັນເປົ້າໝາຍຂອງການພັດທະນາ ແລະ ສິ່ງແວດລ້ອມເປັນສິ່ງຈຳເປັນ. ພ້ອມກັນນັ້ນ ກໍ່ໄດ້ກຳນົດຄາດໝາຍການເຕີບໂຕຂອງ GDP ບໍ່ຫຼຸດ 8% ຕໍ່ປີ ສຳລັບໄລຍະປີ 2011-2015, ກຳນົດການຫຼຸດຜ່ອນຄວາມທຸກຍາກຈາກຍັງເຫຼືອຕ່ຳກວ່າ 15% ໃນປີ 2010 ມາເປັນຍັງເຫຼືອບໍ່ເກີນ 10% ໃນປີ 2015 ແລະ ການເພີ່ມເນື້ອທີ່ປົກຄຸມຂອງປ່າໄມ້ໃຫ້ໄດ້ 65% ຂອງເນື້ອທີ່ທົ່ວປະເທດ ໃນປີ 2015. ຜ່ານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ເຫັນໄດ້ວ່າ ຈຳນວນປະຊາກອນທີ່ດຳລົງຊີວິດຢູ່ໃຕ້ເສັ້ນຄວາມທຸກຍາກ ແມ່ນຫຼຸດລົງມາເປັນ 23,2% ໃນປີ 2012/2013 ທຽບໃສ່ປີ 1997/1998 ແມ່ນ 38.6% (ສູນສະຖິຕິແຫ່ງຊາດ, LECS 5), ແຕ່ການປະຕິບັດເປົ້າໝາຍທາງດ້ານສິ່ງແວດລ້ອມ ໂດຍສະເພາະແມ່ນເນື້ອທີ່ປ່າໄມ້ປົກຫຸ້ມແມ່ນໄດ້ພຽງແຕ່ 46.72% ຂອງເນື້ອທີ່ທົ່ວປະເທດໃນປີ 2015.

ປັດໄຈສຳຄັນໜຶ່ງໃນການພັດທະນາເສດຖະກິດ-ສັງຄົມໃນໄລຍະຜ່ານມານັ້ນ ແມ່ນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນທັງພາຍໃນ ແລະ ຕ່າງປະເທດ ຢູ່ໃນຫຼາຍຂະແໜງການ. ໃນນັ້ນ ການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການລົງທຶນໃນຂະແໜງກະສິກຳ ເພື່ອການຜະລິດເປັນສິນຄ້າແມ່ນໄດ້ສົ່ງຜົນກະທົບຕໍ່ການປ່ຽນແປງການນຳໃຊ້ທີ່ດິນກະສິກຳ ໂດຍສະເພາະປ່າໄມ້ຂັ້ນສອງ (ປ່າເຫຼົ່າເກົ່າ) ແລະ ທີ່ດິນປູກພືດທັນຍາຫານສຳລັບການຄ້ຳປະກັນດ້ານສະບຽງອາຫານ ໄດ້ຖືກປ່ຽນແປງໄປເປັນທີ່ດິນປູກພືດອື່ນ ແລະ ຕົ້ນໄມ້ອຸດສາຫະກຳ. ແບບວິທີການສົ່ງເສີມການລົງທຶນຕໍ່ເອກະຊົນພາຍໃນ ແລະ ຕ່າງປະເທດ ທີ່ສຳຄັນອັນໜຶ່ງນັ້ນ ແມ່ນການຜະລິດກະສິກຳຕາມສັນຍາ (Contract farming). ຜ່ານການຈັດຕັ້ງປະຕິບັດແບບວິທີການສົ່ງເສີມການລົງທຶນດັ່ງກ່າວ ໄດ້ສົ່ງຜົນກະທົບທັງໃນທາງບວກ ແລະ ທາງລົບຕໍ່ບັນຫາການແກ້ໄຂຄວາມທຸກຍາກ ແລະ ສິ່ງແວດລ້ອມ.

ດັ່ງນັ້ນ, ລັດຖະບານແຫ່ງ ສ.ປ.ປ.ລາວ, ໂດຍສະເພາະກະຊວງແຜນການ ແລະ ການລົງທຶນ ໄດ້ສະເໜີໃຫ້ອົງການສະຫະປະຊາຊາດເພື່ອການພັດທະນາ (UNDP) ໃຫ້ການສະໜັບສະໜູນໃນການແກ້ໄຂບັນຫາດັ່ງກ່າວ ດ້ວຍການຈັດຕັ້ງປະຕິບັດແຜນງານ PEI-LAO ເຊິ່ງເປັນໜຶ່ງໃນແຜນງານຮ່ວມມືຂອງ UNDP ແລະ UNEP ທີ່ກຳລັງດຳເນີນງານຢູ່ໃນຫຼາຍປະເທດທົ່ວໂລກ. ແຜນງານດັ່ງກ່າວແມ່ນໄດ້ສະໜັບສະໜູນໃຫ້ມີການປະຕິບັດວຽກງານການເຊື່ອມໂຍງເອົາການແກ້ໄຂຄວາມທຸກຍາກ ແລະ ສິ່ງແວດລ້ອມເຂົ້າໃນການວາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດມາຕັ້ງແຕ່ປີ 2010. ໂດຍມອບໃຫ້ ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດເປັນໃຈກາງປະຕິບັດໂຄງການ PEI-NERI ສົມທົບກັບຄະນະພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກຂັ້ນສູນກາງ; ກົມປູກຝັງ, ກົມແຜນການ ແລະ ການຮ່ວມມື, ກົມສົ່ງເສີມກະສິກຳ ແລະ ສະຫະກອນ, ແລະ ສະຖາບັນຄົ້ນຄວ້າກະສິກຳ ແລະ ປ່າໄມ້ແຫ່ງຊາດ/ກະຊວງກະສິກຳ ແລະ ປ່າໄມ້; ສະຖາບັນຊັບພະຍາ ກອນທຳມະຊາດ ແລະ ສິ່ງແວດລ້ອມ, ແລະ ສູນຂໍ້ມູນຂ່າວສານດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ/ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ; ຄະນະເສດຖະສາດ ແລະ ບໍລິຫານທຸລະກິດ, ແລະ ຄະນະວິທະຍາສາດສິ່ງແວດລ້ອມ/ມະຫາວິທະຍາໄລແຫ່ງຊາດ, ແລະ ພະແນກແຜນການ ແລະ ການລົງທຶນຂອງ ແຂວງວຽງຈັນ ດຳເນີນການຄົ້ນຄວ້າກ່ຽວກັບ "*ຜົນກະທົບຂອງການຜະລິດກະສິກຳຕາມສັນຍາຕໍ່ກັບຄວາມທຸກຍາກ ແລະ ສິ່ງແວດລ້ອມ ຢູ່ໃນ ສ.ປ.ປ.ລາວ*" ເຊິ່ງເປົ້າ ໝາຍຂອງການຄົ້ນຄວ້າໃນຫົວຂໍ້ດັ່ງກ່າວ ແມ່ນເພື່ອສືບຕໍ່ສ້າງຄວາມເຂົ້າໃຈຂອງພວກເຮົາໃຫ້ຫຼາຍຂຶ້ນ ກ່ຽວກັບວ່າ ການຜະລິດກະສິກຳຕາມສັນຍາໄດ້ປະກອບສ່ວນຕໍ່ການຫຼຸດຜ່ອນຄວາມທຸກຍາກ ແລະ ມີຜົນກະທົບຕໍ່ສະພາບແວດລ້ອມຄືແນວໃດ.